# ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ

*ບຸນກອງ ທ່ຽງຈັນຫອມ*, ທອງທ່ຽນ ວັດທະນາວົງ, ບຸນທ່ຽງ ວົງຊວງທຳ, ໄພວັນ ວັດທະນາວົງ*

*ແລະ ວົງພິບູນ ວົງພະຈັນ.*

*ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

---

***ບົດຄັດຫຍໍ້***

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ.ໂດຍມີຈຸດປະສົງເພື່ອ: (1) ສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ແລະ (2) ປຽບທຽບ ສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ໂດຍຈຳແນກຕາມໂຮງຮຽນ. ໂດຍກຸ່ມຕົວຢ່າງແມ່ນຄູສອນ ຈຳນວນ 187 ຄົນ ແລະ ເຄື່ອງມືທີ່ໃຊ້ໃນການສຶກສາເປັນແບບສອບຖາມຄູ່ຂະໜານຄື: ສະພາບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ. ນຳໃຊ້ການວິເຄາະຂໍ້ມູນດ້ວຍຄ່າສະຖິຕິພື້ນຖານ ໄດ້ແກ່: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ດັດສະນີຄວາມຕ້ອງການຈຳເປັນ (Priority Need assessment Index: PNI) ແລະ ປຽບທຽບສະພາບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນດ້ວຍການວິເຄາະຄ່າຜັນປ່ຽນແບບທາງດຽວ (One-Way ANOVA) ຜົນການຄົ້ນຄວ້າພົບວ່າ: ສະພາບປັດຈຸບັນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{x}$ = 3.65; S.D = 0.45), ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍທີ່ສຸດ ( $\bar{x}$ = 4.50; S.D = 0.50) ແລະ ຄ່າດັດສະນີຄວາມຕ້ອງການຈຳເປັນ (PNI) ເທົ່າກັບ 0.23. ເມື່ອປຽບທຽບດ້ານສະພາບການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ແລະ ຄວາມຕ້ອງ ການຈຳເປັນໂດຍຈຳແນກຕາມໂຮງຮຽນແລ້ວ ເຫັນວ່າ: ທຸກໂຮງຮຽນມີລະດັບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ບໍ່ແຕກຕ່າງກັນ ດ້ວຍລະດັບຄວາມສຳຄັນ 0.05.

***ຄຳສັບສຳຄັນ:*** *ຊຸມຊົນການຮຽນຮູ້ທາງວິຊາຊີບ, ການເຮັດວຽກເປັນທີມ, ການແລກປ່ຽນຮຽນຮູ້ຮ່ວມກັນ, ຄ່າດັດສະນີຄວາມຕ້ອງການຈຳເປັນ*

---

* *ຕິດຕໍ່ພົວພັນ: ບຸນກອງ ທ່ຽງຈັນຫອມ, ເບີໂທ: 020 55417925, ອີເມວ: bkthiengtch@gmail.com*

*Journal of Science and Teacher Education (JLSTE), 1*(1), 120-130

# Needs Assessment of Professional Learning Community in Secondary School at LuangPrabang City

*Bounkong Thiengchanhom *, Thongthiane Vathanavong, Bounthieng Vongsouangtham, Phayvanh Vathanavong, and Vongphiboun Vongphachanh*

*Faculty of Education Souphanouvong University, Lao PDR*

## Abstract

This study investigates the necessity and implementation of establishing professional learning communities in secondary schools in Luang Prabang. The objectives of the study are: (1) to examine the existing challenges and the necessity of establishing professional learning communities, and (2) to compare these challenges and necessities across different secondary schools. The sample group consists of 187 secondary school teachers. The research instruments include a structured questionnaires assessing working conditions and the necessity of establishing professional learning communities in secondary schools in Luang Prabang. Data analysis employs fundamental statistical methods, including mean, standard deviation (S.D.), and the Priority Need Assessment Index (PNI). Additionally, one-way ANOVA is used to compare the state of the challenges and the necessity of establishing professional learning communities across different schools. The study found that the overall implementation of professional learning communities in secondary schools in Luang Prabang city is at a high level ( $\bar{x} = 3.65$; S.D = 0.45). The overall necessity for establishing professional learning communities in these schools is at the highest level ( $\bar{x} = 4.50$; S.D = 0.50) with a PNI value of 0.23. A comparison of the challenges and necessity for professional learning communities across different schools indicates no significant differences at a 0.05 significance level.

**Keywords:** Professional Learning Community, Team work, Cooperative Learning, Priority Need Assessment Index

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ໃນປັດຈຸບັນເພື່ອຊຸກຍູ້ຂະບວນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນກ້າວໜ້າ, ທ່ວງທັນກັບການປ່ຽນແປງໃໝ່ຂອງໂລກ, ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ສຸມໃສ່ການພັດທະນາວຽກງານການສຶກສາຕ້ອງໄປກ່ອນວຽກງານອື່ນໜຶ່ງບາດກ້າວ, ໂດຍມີຈຸດສຸມໃສ່ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກສາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ. ໂດຍມີຈຸດປະສົງດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ທີ່ມີຈຸດສຸມເນັ້ນໃສ່ຫຼາຍບັນຫາ (ກະຊວງສຶກສາທິການ ແລະ ກິລາ, 2020) ໃນນັ້ນກ່ຽວກັບຂະບວນການການຈັດຕັ້ງກຸ່ມ ຄື: (1) ເພື່ອປັບປຸງຄວາມຮູ້ທາງດ້ານເນື້ອໃນຂອງບົດສອນ ແລະ ທັກສະດ້ານການສິດສອນຂອງຄູສອນຊັ້ນປະຖົມສຶກສາໂດຍໃຫ້ບູລິມະສິດໃນການຈັດສັນງົບປະມານໃສ່ຂະແໜງການຍ່ອຍປະຖົມສຶກສາ. (2) ເພື່ອຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນຢ່າງປະຢັດ, ມີປະສິດທິພາບ ແລະ ສອດຄ່ອງກັບຕົວຈິງ, ແຕ່ຜົນປະໂຫຍດທີ່ໄດ້ຮັບຈາກການເຂົ້າເຖິງການສຶກສາຊັ້ນມັດທະຍົມຕອນຕົ້ນຈະບໍ່ເກີດຂຶ້ນ ຖ້າຫາກຜົນການຮຽນ ກໍຄືທັກສະການອ່ານອອກຂຽນໄດ້ ແລະ ທັກສະການຄິດໄລ່ເລກຂອງນັກຮຽນ ຜູ້ທີ່ຈົບຊັ້ນປະຖົມ ບໍ່ໄດ້ຮັບການປັບປຸງດີຂຶ້ນ. (ການຂະຫຍານການສຶກສາກ່ອນໄວຮຽນ ກໍມີຜົນເຮັດໃຫ້ຄຸນນະພາບ ຂອງຜູ້ຮຽນຈົບຊັ້ນປະຖົມດີຂຶ້ນ). (3) ເພື່ອສ້າງຄວາມກົມກຽວກັນລະຫວ່າງທັກສະ ແລະ ຄວາມສາມາດຂອງພະນັກງານ ພາຍໃນກະຊວງສຶກ ສາທິການ ແລະ ກິລາ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງວຽກງານໃນປັດຈຸບັນ ແລະ ອານາຄົດ. (ເຮັດວຽກຫຼາຍຂຶ້ນໂດຍໃຊ້ຈຳນວນຄົນເທົ່າເດີມ ໂດຍຜ່ານການປັບປຸງລະບົບການຄຸ້ມ ຄອງຊັບພະຍາກອນມະນຸດ) ແລະ (4) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາ ແຂວງ,

ຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອປັບປຸງປະສິດທິພາບ, ປະສິດທິຜົນ ແລະ ຄວາມຮັບຜິດ ຊອບຂອງເຂົາເຈົ້າ ໂດຍຜ່ານການສ້າງຄວາມກົມກຽວກັນລະຫວ່າງໜ້າທີ່, ພາລະບົດບາດ ແລະ ຄວາມຮັບ ຜິດຊອບ; ການກຳນົດຕຳແໜ່ງງານ ແລະ ວິຊາສະເພາະໃຫ້ມີຄວາມຊັດເຈນ; ການສ້າງລະບົບສະໜອງ ແລະ ຈັດສັນຊັບພະຍາກອນມະນຸດ ແລະ ຊັບພະຍາກອນການເງິນທີ່ອີງໃສ່ຄວາມຕ້ອງການຕົວຈິງ.

ນອກຈາກນີ້ ໃນແຜນພັດທະນາການສຶກສາ ແລະ ກິລາ 2021-2025 ຍັງໄດ້ສົ່ງເສີມໃຫ້ສ້າງ ແລະ ຈັດຕັ້ງປະຕິບັດວິທີການທີ່ມີລັກສະນະຍຸດທະສາດ ແລະ ກວມລວມດ້ານການພັດທະນາອາຊີບດ້ານການສຶກສາ. ວິທີການທີ່ມີລັກສະນະຍຸດທະສາດດັ່ງກ່າວ ຄວນກວມເອົາໄປຄົບວົງວຽນຂອງອາຊີບທັງໝົດ ຊຶ່ງລວມມີ ຄວາມດຶງດູດໃນອາຊີບຄູ, ຄວາມຮູ້ເບື້ອງຕົ້ນດ້ານການສຶກສາ, ການສືບຕໍ່ຢູ່ໃນອາຊີບຄູ, ຄວາມກ້າວໜ້າດ້ານອາຊີບ ແລະ ການພັດທະນາອາຊີບແບບຕໍ່ເນື່ອງ ລວມທັງການຮ່ວມມືຊ່ວຍເຫຼືອຂອງຄູ່ຮ່ວມງານ. ຕ້ອງສຸມໃສ່ຊຸກຍູ້ຊ່ວຍເຫຼືອການພັດທະນາອາຊີບທີ່ມີລັກສະນະຕໍ່ເນື່ອງຂອງຄູ ແລະ ຜູ້ອຳນວຍການໃນຂັ້ນໂຮງຮຽນ ແລະ ທ້ອງຖິ່ນ. ເພື່ອສົ່ງເສີມໃຫ້ຄູສອນມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ໂດຍຜ່ານການ ຊ່ວຍເຫຼືອຈາກວິຊາການກຸ່ມໂຮງຮຽນ ແລະ ຄູສຶກສານິເທດໂດຍຂະບວນການຝຶກອົບຮົມ, ສະໜັບສະໜູນຄູ ອາດປະກອບມີການແນະນຳ, ການສະໜັບສະໜູນຈາກເພື່ອນຮ່ວມງານ ແລະ ກຸ່ມນັກວິຊາການ ເພື່ອເປັນກົນໄກເພີ່ມເຕີມຈາກການຈັດກອງປະຊຸມຝຶກອົບຮົມ ແລະ ການສະໜັບ ສະໜູນຈາກຄູສຶກສານິເທດ (ກະຊວງສຶກສາທິການ ແລະ ກິລາ, 2020). ໃນຂະນະທີ່ທັກສະແຫ່ງສະຕະວັດທີ 21 ໜ້າທີ່ຂອງຄູຈຶ່ງຕ້ອງຫັນຈາກການເນັ້ນທີ່ “ ການສອນ ” ຫຼື ການຊີ້ນຳເປັນການປຸກລະດົມຄວາມສົນໃຈໃນການຮຽນຮູ້ (ສ້າງແຮງບັນດານໃຈໃຫ້ແກ່ນັກຮຽນ, ໃຫ້ນັກຮຽນຮຽນຮູ້ດ້ວຍການເຮັດ. (learning by doing) ໄດ້ພັດທະນາທັກສະການດຳລົງຊີວິດໃນສະຕະວັດທີ 21 ຜ່ານການເຮັດວຽກເປັນທີມຂອງຕົນເອງກັບໝູ່ເພື່ອນ. ສຸມໃສ່ການຮຽນຮູ້ທັກສະ ແລະ ຄົ້ນຫາຄວາມຮູ້ຫຼາຍກວ່າຄວາມຮູ້ຂອງຕົນເອງ ປ່ຽນວິທີການເຮັດວຽກຈາກການເຮັດວຽກຄົນດຽວ ເປັນການເຮັດວຽກ ແລະ ຮຽນຮູ້ຈາກການເຮັດວຽກເປັນທີມ, ພາລະບົດບາດຂອງຄູອາຈານ ຕ້ອງໄດ້ປ່ຽນຈາກ " ຄູອາຈານ " ເປັນ " ຄູຝຶກສອນ " ຫຼື " ຜູ້ອຳນວຍຄວາມສະດວກໃນການຮຽນຮູ້ " (ວິຈານ ພານິດ , 2012).

ກຸ່ມໂຮງຮຽນມັດທະຍົມ ສ້າງຕັ້ງຂຶ້ນເພື່ອຊຸກຍູ້ສົ່ງເສີມດ້ານວິຊາການ ລະຫວ່າງຄູພາຍໃນກຸ່ມໂຮງຮຽນ ແລະໂຮງຮຽນທີ່ໃກ້ຄຽງກັນ ຊຶ່ງມີພາລະບົດບາດໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແລກປ່ຽນບົດຮຽນດ້ານປະສົບການການສອນ, ການນຳໃຊ້ຫ້ອງທົດລອງ, ການນິເທດພາຍໃນ, ການຊ່ວຍເຫຼືອຄູ, ການນຳໃຊ້ສື່ ແລະ ອຸປະກອນຮ່ວມກັນ ພ້ອມທັງມີການກວດກາ, ຕິດຕາມ ແລະ ປະເມີນຜົນ ການຮຽນ ການສອນຂອງຄູ ແລະ ນັກຮຽນພາຍໃນກຸ່ມ (ກະຊວງສຶກສາທິການ ແລະ ກິລາ, 2015). ເຊັ່ນດຽວກັບ ໂຮງຮຽນມັດທະຍົມຂັ້ນແຂວງ ທີ່ຂຶ້ນສັງກັດເທດສະບານນະຄອນຫຼວງພະບາງ ໄດ້ການສ້າງຕັ້ງກຸ່ມຂຶ້ນ 1 ກຸ່ມເຊິ່ງປະກອບມີ: ໂຮງຮຽນ ມສ ສັນຕິພາບ, ມສ ປ່ອງຄຳ, ມສ ເດັກກຳພ້າ, ມສ ປະຊາທິປະໄຕ, ມສ ສິງ, ມປ ພັນຫຼວງ, ສູນ IT ແລະ ສູນການສຶກສານອກໂຮງຮຽນແຂວງ (ພະແນກ
ສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ, 2022). ຈາກການເຄື່ອນໄຫວຂອງກຸ່ມໂຮງຮຽນມັດທະຍົມເທດສະບານນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ໃນໄລຍະຜ່ານມາໄດ້ພົບພໍ້ບັນຫາທີ່ເກີດຂຶ້ນຫຼາຍຢ່າງ ເປັນຕົ້ນແມ່ນ: ກຸ່ມເທດສະບານນະຄອນຫຼວງພະບາງ ຫາກໍ່ສ້າງຂຶ້ນໃຫມ່ຄູອາຈານບາງທ່ານຍັງບໍ່ທັນເຂົ້າໃຈໃນການສ້າງແຜນ ພັດທະນາພາຍໃນກຸ່ມ. ຄູສອນພາຍໃນກຸ່ມໂຮງຮຽນຍັງບໍ່ເຄີຍຈັດຝຶກອົບຮົມ, ນິເທດພາຍໃນກ່ຽວກັບປຶ້ມຄູ່ມືກຸ່ມໂຮງຮຽນ. ນັກຮຽນຍັງມີຜູ້ທີ່ຮຽນອ່ອນຫຼາຍອ່ານບໍ່ໄດ້ຂຽນບໍ່ເປັນ. ນັກຮຽນເກັ່ງຍັງບໍ່ບັນລຸເປົ້າເພື່ອກຽມເຂົ້າສອບເສັງຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນກະຊວງ.ກຸ່ມໂຮງຮຽນຍັງຂາດອຸປະກອນຮັບໃຊ້ວຽກງານພາຍໃນກຸ່ມ. ເຊິ່ງບັນຫາດັ່ງກ່າວເກີດຈາກສາເຫດຄື: ເປັນກຸ່ມທີ່ສ້າງຕັ້ງຂຶ້ນໃຫມ່ຍັງບໍ່ທັນເຄີຍຂຶ້ນແຜນການເຄື່ອນໄຫວກຸ່ມທີ່ລະອຽດ. ຄູສອນພາຍໃນກຸ່ມບາງຄົນ, ບາງວິຊາຍັງສອນບໍ່ໄດ້ມາດຕະຖານ, ບາງຄົນບໍ່ຖືກກັບວິຊາທີ່ຮຽນຈົບ. ຄວາມສົນໃຈຕໍ່ການຮຽນຂອງນ້ອງນັກຮຽນຍັງມີໜ້ອຍຍ້ອນບໍ່ມີການແຂ່ງຂັນດ້ານຄວາມຮູ້ພາຍໃນກຸ່ມ. ຄູສອນທີ່ສອນປະຈຳແຕ່ລະໂຮງຮຽນຂອງກຸ່ມຍັງບໍ່ມີປະສົບການສູງ ແລະ ຜ່ານມາການອອກຫົວບົດສອບເສັງເລື່ອນຂັ້ນຂອງແຕ່ລະໂຮງຮຽນຍັງບໍ່ເອກະພາບກັນ (ໂຮງຮຽນ ມສ ປາກກະດິງ, 2022). ນອກຈາກນີ້, ຍັງພົບບັນຫາທີ່ຄ້າຍກັນໃນການຈັດຕັ້ງກຸ່ມດັ່ງກ່າວທີ່ມີການຈັດຕັ້ງປະຕິບັດວຽກງານຂອງກຸ່ມໂຮງຮຽນ ມ ສ ປາກກະດິງ, ພົບວ່າ: ຍ້ອນຄະນະບໍລິຫານກຸ່ມຂອງພວກເຮົາຍັງມີບົດຮຽນໜ້ອຍໃນການຊີ້ນຳນຳພາ ແລະ ບໍລິຫານວຽກງານກຸ່ມໂຮງຮຽນຈຶ່ງເຮັດໃຫ້ການປະຕິບັດຍັງບໍ່ທັນມີຄວາມຄ່ອງໂຕເທົ່າທີ່ຄວນ. ຍ້ອນວິຊາການກຸ່ມພວກເຮົາສ່ວນຫຼາຍແມ່ນມີຊົ່ວໂມງສອນ ແລະ ເຮັດວຽກຫຼາຍໜ້າວຽກຢູ່ພາຍໃນໂຮງຮຽນ ຈຶ່ງເຮັດໃຫ້ພົບກັບອຸປະສັກໃນການອອກເຄື່ອນໄຫວນອກໂຮງຮຽນ. ວິຊາການກຸ່ມຈຳນວນໜຶ່ງແມ່ນຍັງມີຄວາມຮູ້ຈຳກັດ, ຂາດທັກສະທາງດ້ານວິຊາການທີ່ຈຳເປັນຈຶ່ງເຮັດໃຫ້ພົບຄວາມຫຍຸ້ງຍາກໃນການປະຕິບັດວຽກງານ (ໂຮງຮຽນ ມສ ປະຊາທິປະໄຕ, 2022).

ຕໍ່ກັບສະພາບການດັ່ງກ່າວບັນດາຜູ້ບໍລິຫານໄດ້ຊອກຊ່ອງໃນການແກ້ໄຂບັນຫາ ດ້ວຍຫຼາຍຮູບການ ແລະ ຈາກການສຶກສາຫຼັກການຕ່າງໆ ເຫັນວ່າວິທີການໃນການແກ້ໄຂບັນຫາທີ່ນິຍົມໃຊ້ກັນ ແລະ ແຜ່ຫຼາຍໃນລະດັບສາກົນ ຄື: ການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ (Professional Learning Communities: PLC) ທີ່ເປັນການພັດທະນາຄຸນນະພາບການສຶກສາ ໂດຍເນັ້ນການເຮັດວຽກວຽກຮ່ວມກັນຂອງຄູ ແລະ ບຸກຄະລາກອນທາງການສຶກສາ ເພື່ອປັບປຸງການຮຽນ ການສອນ ແລະ ຍົກລະດັບຜົນສຳເລັດຂອງນັກຮຽນ. ຫຼັກການສຳຄັນຂອງ PLC ປະກອບດ້ວຍ: (1) ການມີວິໄສທັດ ແລະ ເປົ້າ

ໝາຍຮ່ວມກັນ, (2) ການຮຽນຮູ້ ແລະ ພັດທະນາວິຊາຊີບຢ່າງຕໍ່ເນື່ອງ, (3) ການເຮັດວຽກຮ່ວມກັນແບບຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ແລະ ການເນັ້ນຜົນສຳເລັດ ແລະ ປັບປຸງຢ່າງຕໍ່ເນື່ອງ. ການສຶກສາສະພາບການເຮັດວຽກຂອງ PLC ໃນໂຮງຮຽນມັດທະຍົມມີຄວາມສຳຄັນ ແລະ ຈຳເປັນ ເນື່ອງຈາກ: (1) ຊ່ວຍພັດທະນາທັກສະ ແລະ ຄວາມຮູ້ຂອງຄູຜ່ານການແລກປ່ຽນຮຽນຮູ້ ແລະ ການພັດທະນາວິຊາຊີບ, (2) ສົ່ງເສີມການເຮັດວຽກຮ່ວມກັນແບບຮ່ວມມື ແລະ ການສື່ສານທີ່ດີຂຶ້ນໃນກຸ່ມຄູ ແລະ ບຸກຄະລາກອນ, (3) ຊ່ວຍໃຫ້ໂຮງຮຽນສາມາດຕອບສະໜອງຄວາມຕ້ອງການຂອງນັກຮຽນໄດ້ດີຂຶ້ນ, (4) ສົ່ງຜົນຕໍ່ການປັບປຸງຄຸນນະພາບການຮຽນ ການສອນ ແລະ ຍົກລະດັບຜົນສຳເລັດຂອງນັກຮຽນ, (5) ຊ່ວຍສ້າງບັນຍາກາດການຮຽນຮູ້ທີ່ດີຂຶ້ນໃນໂຮງຮຽນ ເຊິ່ງຫຼັກການດັ່ງກ່າວເປັນແນວທາງສຳຄັນໃນການພັດທະນາຄຸນນະພາບການສຶກສາ ແລະ ຍົກລະດັບມາດຕະຖານການຮຽນຮູ້ຂອງນັກຮຽນ ຊຶ່ງຈະສົ່ງຜົນດີຕໍ່ການພັດທະນາຂີດຄວາມສາມາດຂອງນັກຮຽນໃນໄລຍະຍາວ (Dufour, Dufour, Eaker, and Thattos, 2023). ນອກຈາກນີ້, ການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຍັງສາມາດມາຊ່ວຍໃຫ້ຄູມີໂອກາດປັບປຸງການຮຽນການສອນໄດ້ໂດຍກົງ, ສ້າງຄວາມສຳພັນອັນແໜ້ນແຟ້ນຍິ່ງຂຶ້ນລະຫວ່າງສະມາຊິກໃນທີມ, ຊ່ວຍໃຫ້ຄູສອນສາມາດຕິດຕາມງານວິໄຈ ແລະ ເຄື່ອງມືເທັກໂນໂລຍີທີ່ເກີດຂຶ້ນມາໃໝ່ສຳລັບຫ້ອງຮຽນ ເຊິ່ງສາມາດຊ່ວຍໃຫ້ຄູສາມາດສະທ້ອນຄວາມຄິດເຫັນກ່ຽວກັບສະພາບ ແລະ ບັນຫາການຮຽນການສອນໃນສະຖາບັນຂອງຕົນໄດ້ດີທີ່ສຸດ (ໄພພະກາ ຜົວດຳ, 2021; ເອກະພົນ ສິດແສງ, 2022).

ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນີ້, ຜູ້ຄົ້ນຄວ້າຈິ່ງສົນໃຈສຶກສາການປະຕິບັດວຽກງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບໃນກຸ່ມໂຮງຮຽນມັດທະຍົມຂັ້ນແຂວງ ຫຼວງພະບາງ ເພື່ອເປັນການສ້າງໂອກາດໃຫ້ຜູ້ບໍລິຫານ, ຄູ ແລະ ນັກຮຽນໄດ້ຮ່ວມແບ່ງປັນແນວຄິດໃນການພັດທະນາຄຸນນະພາບການຮຽນການສອນ ແລະ ສະພາບແວດລ້ອມໃນການຮຽນທີ່ເໝາະສົມ ທີ່ຈະຊ່ວຍໃຫ້ນັກຮຽນທຸກຄົນສາມາດບັນລຸສັກກະຍະພາບການຮຽນຂັ້ນສູງສຸດຂອງຕົນເອງໄດ້.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1) ໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງມີສະພາບປັດຈຸບັນໃນການຈັດການຮຽນການສອນ ແລະ ມີຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຄືແນວໃດແດ່?

2) ບັນດາໂຮງຮຽນເຫຼົ່ານັ້ນມີສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບແຕກຕ່າງກັນຄືແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ແລະ

2) ປຽບທຽບ ສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບໂດຍຈຳແນກຕາມໂຮງຮຽນ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຜູ້ຄົ້ນຄວ້າໄດ້ສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການພັດທະນາຊຸມຊົນການຮຽນຮູ້ທາງວິຊາຊີບ ແລະ ການສຶກສາຄວາມຕ້ອງການຈຳເປັນ ດັ່ງລາຍລະອຽດດັ່ງນີ້:

ຊາລິນີ ຕຣີວະລັນຍູ (2017) ໄດ້ຄົ້ນຄວ້າການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບດ້ວຍການພັດທະນາບົດຮຽນຮ່ວມກັນ: ແນວຄິດ ແລະ ແນວທາງສູ່ຄວາມສຳເລັດ. ຜົນການຄົ້ນຄວ້າພົບວ່າ: ຊຸມຊົນການຮຽນຮູ້ທາງວິຊາຊີບຄືວິຖີການຮວມກຸ່ມເຮັດວຽກຮວມພະລັງຂອງຜູ້ສອນ ແລະ ບຸກຄະລາກອນທາງການສຶກສາທີ່ມີເປົ້າໝາຍເພື່ອພັດທະນາຜູ້ຮຽນ, ພັດທະນາຂະບວນການຮຽນການສອນ ແລະ ຄຸນນະພາບຂອງການສຶກສາ. ໂດຍໃຊ້ຂະບວນການຮຽນຮູ້ຈາກການປະຕິບັດຈິງ, ການຖອດຖອນບົດຮຽນ, ການສືບເສາະເພື່ອສະທ້ອນຜົນທາງດ້ານວິຊາຊີບ ແລະ ແລກປ່ຽນປະສົບການ - ບົດຮຽນ, ນັບທັງຄ່ານິຍົມ, ວິໄສທັດ, ພາວະຜູ້ນຳ ແລະ ປະສົບການການປະຕິບັດງານສ່ວນຕົວຮ່ວມກັນຢ່າງຕໍ່ເນື່ອງ. ແຕ່ການດຳເນີນງານຕາມແນວຄິດນີ້ບໍ່ໄດ້ມີຂັ້ນຕອນຫຼືຮູບແບບການດຳເນີນງານທີ່ເປັນຮູບປະທຳ. ຜູ້ສົນໃຈສາມາດໃຊ້ການສຶກສາການສອນ ເປັນອີກທາງເລືອກໜຶ່ງໃນການດຳເນີນງານໄດ້ ເຊິ່ງສອດຄ່ອງກັບແນວຄິດຊຸມຊົນການຮຽນຮູ້ທາງວິຊາຊີບ ແລະ ສາມາດຊ່ວຍພັດທະນາຄູ, ນັກຮຽນ, ສະພາບການຮຽນການສອນ ແລະ ສຳພັນທະພາບຂອງບຸກຄະລາກອນໃນສະຖານສຶກສາໄດ້ພ້ອມກັນ ແຕ່ຕ້ອງອາໄສການສ້າງຄວາມເຂົ້າໃຈທີ່ຖືກຕ້ອງ, ການໃຊ້ເທັກນິກວິທີໃນແຕ່ລະຂັ້ນຕອນຂອງການດຳເນີນງານ,

ການສື່ສານທາງບວກ, ແລະ ການມີສ່ວນຮ່ວມຂອງຜູ້ບລິຫານ ຈຶ່ງສາມາດສ້າງການປ່ຽນແປງສຳເລັດຜົນ ແລະ ເກີດຊຸມຊົນການຮຽນຮູ້ທາງວິຊາຊີບໄດ້ຢ່າງແທ້ຈິງ.

ສິລິຂັນ ບຸນທຳ ແລະ ຄະນະ (2021) ສຶກສາກ່ຽວກັບຄວາມຕ້ອງການຈຳເປັນເພື່ອພັດທະນາດ້ານການຈັດການຮຽນການສອນຂອງນັກສຶກສາມະຫາວິທະຍາໄລຣາຊະພັດວະໄລຍໍລົງກອນ ໃນພະບໍລົມມະລາຊູປະຖຳ ໂດຍມີ ຈຸດປະສົງຂອງເອກະສານຄົ້ນຄວ້ານີ້ແມ່ນເພື່ອປະເມີນ ແລະ ຈັດລຳດັບຄວາມຈຳເປັນສຳລັບການພັດທະນາການຈັດການສອນ ແລະ ການຮຽນຮູ້ຂອງນັກສຶກສາຂອງມະຫາວິທະຍາໄລ. ກຸ່ມຕົວຢ່າງແມ່ນນັກຮຽນ 270 ຄົນທີ່ໄດ້ມາໂດຍວິທີການເລືອກແບບແບ່ງຊັ້ນ. ເຄື່ອງມືຄົ້ນຄວ້າແມ່ນແບບສອບຖາມຊະນິດຄວບຄູ່. ວິເຄາະຂໍ້ມູນໂດຍໃຊ້ສະຖິຕິບັນລະຍາຍ ໄດ້ແກ່: ຄ່າຄວາມຖີ່, ເປີເຊັນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ນຳໃຊ້ເຕັກນິກການວິເຄາະ Modified Priority Needs Index ($PNI_{modified}$) ໃນການຈັດລຳດັບຄວາມຕ້ອງການທີ່ຈຳເປັນ. ຜົນການຄົ້ນຄວ້າພົບວ່າ ຄວາມຈຳເປັນໂດຍລວມຂອງການຈັດການໂຮງຮຽນ ດັດຊະນີ $PNI_{modified}$ ເທົ່າກັບ 0.37 (ຫຼາຍກວ່າ 0.35), ເຊິ່ງຖືວ່າເປັນຄວາມຈຳເປັນອັນຮີບດ່ວນທີ່ຈະພັດທະນາ, ແລະ ເມື່ອພິຈາລະນາເປັນລາຍດ້ານໂດຍລຽງລຳດັບຄວາມຕ້ອງການຈຳເປັນ 3 ລຳດັບທຳອິດ ໄດ້ແກ່: ສະຫນັບສະຫນູນການຮຽນຮູ້ (0.46), ຮອງລົງມາແມ່ນສິ່ງອຳນວຍຄວາມສະດວກ (0.39) ແລະ ດ້ານການພັດທະນານັກຮຽນ (0.36) ຕາມລຳດັບ.

ຊະອະລິດ ຍິ້ມແຍ້ມ (2023) ສຶກສາກ່ຽວກັບຄວາມຕ້ອງການຈຳເປັນແລະແນວທາງການພັດທະນາການດຳເນີນງານລະບົບດູແລຊ່ວຍເຫຼືອນັກຮຽນຂອງໂຮງຮຽນຂະຫຍາຍໂອກາດທາງການສຶກສາ ສັງກັດເຂດພື້ນທີ່ການສຶກສາປະຖົມສຶກສາສະກົນນະຄອນ ເຂດ 1, ຜົນການຄົ້ນຄວ້າພົບວ່າ: (1) ສະພາບປັດຈຸບັນ ແລະ ສະພາບທີ່ເພິ່ງປະສົງໃນການດຳເນີນງານລະບົບດູແລຊ່ວຍເຫຼືອ ໂດຍລວມຢູ່ໃນລະດັບຫຼາຍ ແລະ ຫຼາຍທີ່ສຸດ ຕາມລຳດັບ. (2) ສະພາບປັດຈຸບັນ ແລະ ສະພາບທີ່ເພິ່ງປະສົງໃນການດຳເນີນງານລະບົບດູແລຊ່ວຍເຫຼືອ ຕາມຄວາມຄິດເຫັນຂອງໂຮງຮຽນ ແລະ ຄູ ໂດຍຈຳແນກຕາມສະຖານະພາບຕຳແໜ່ງງານ, ຂະໜາດຂອງໂຮງຮຽນ ແລະ ປະສົບການໂດຍລວມ ແລະ ລາຍດ້ານ ບໍ່ແຕກຕ່າງກັນ. (3) ສະພາບປັດຈຸບັນ ແລະ ສະພາບທີ່ເພິ່ງປະສົງໃນການດຳເນີນງານລະບົບດູແລຊ່ວຍເຫຼືອ ຕາມຄວາມຄິດເຫັນຂອງໂຮງຮຽນ ແລະ ຄູ ໂດຍລຽງລຳດັບຈາກຫຼາຍໄປຫາໜ້ອຍ ດັ່ງນີ້: ດ້ານການພັດທະນາສົ່ງເສີມນັກຮຽນ, ດ້ານການຄັດເລືອກນັກຮຽນ, ດ້ານການປ້ອງກັນ ແລະ ແກ້ໄຂບັນຫາ, ດ້ານການສົ່ງຕໍ່ນັກຮຽນ ແລະ ດ້ານການຮູ້ຈັກນັກຮຽນເປັນລາຍບຸກຄົນ.

ຈາກການສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງມາຂ້າງເທິງນີ້ ສາມາດສະຫຼຸບໄດ້ວ່າ ຊຸມຊົນການຮຽນຮູ້ທາງວິຊາຊີບເປັນການຮວມຕົວກັນ ຮ່ວມແຮງຮ່ວມໃຈກັນ ຂອງຄູ, ຜູ້ບໍລິຫານ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍມີວິໄສທັດ, ເຫັນຄຸນຄ່າການສຶກສາ, ມີເປົ້າໝາຍ ແລະ ພາລະກິດຮ່ວມກັນໂດຍເຮັດວຽກເປັນທີມທີ່ມີຄູຜູ້ສອນເປັນຜູ້ນຳຮ່ວມກັນ ແລະ ຜູ້ບໍລິຫານສະໜັບສະໜູນສູ່ການຮຽນຮູ້ ແລະ ພັດທະນາວິຊາຊີບປ່ຽນແປງຄຸນນະພາບຕົນເອງສູ່ຄຸນນະພາບຜູ້ຮຽນທີ່ເນັ້ນເຖິງຜົນສຳເລັດ ຫຼື ປະສິດທິຜົນຂອງຜູ້ຮຽນເປັນສຳຄັນ ແລະ ຄວາມສຸກຂອງການເຮັດວຽກຮ່ວມກັນຂອງສະມາຊິກໃນຊຸມຊົນການຮຽນຮູ້ ເຊິ່ງຈຳເປັນຕ້ອງສຶກສາຄວາມຕ້ອງການຈຳເປັນກ່ອນຈະດຳເນີນການຂະບວນການດັ່ງກ່າວໄດ້. ສາມາດສະຫຼຸບເປັນຂອບຄວາມຄິດໃນການຄົ້ນຄວ້າຄັ້ງນີ້ດັ່ງຮູບທີ່ 1.




ຮູບທີ່ 1 ຂອບຄວາມຄິດໃນການສຶກສາ

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ເປັນສຶກສາສຳຫຼວດຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ (Professional Learning Communities: PLC) ຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ເຊິ່ງມີລາຍລະອຽດດັ່ງນີ້:

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ກຸ່ມປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ເປັນຜູ້ຄູສອນ ສັງກັດໃນໂຮງຮຽນມັດທະຍົມ 6 ແຫ່ງ ໃນນະຄອນຫຼວງພະບາງ ສົກສຶກສາ 2024-2025 ຈານວນ 352 ຄົນ. ໂດຍເລືອກມາກຸ່ມຕົວຢ່າງ ຈຳນວນ 187 ຄົນ ໂດຍການກຳນົດຂະໜາດຂອງຕົວຢ່າງຕາມສູດຂອງ ທາໂຣ ຢາມາເນະ (Taro Yamane)

$$n = \frac{N}{1 + N.\ e^2}$$

(ອ້າງເຖິງໃນ ມາລຸດ ພັດພົນ, 2019) ແລະ ນຳໃຊ້ເທັກນິກການເລືອກຕົວຢ່າງແບບແບ່ງຊັ້ນ (Stratified random sample sampling).

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການສຶກສາເປັນແບບສອບຖາມຊະນິດປະເມີນຄ່າ 5 ລະດັບ (Rating Scale) ທີ່ເປັນຮູບແບບຕອບສະໜອງຄູ່ (Dual-Response Format) ທີ່ລະບຸສະພາບປັດຈຸບັນ/ບັນຫາ ແລະ ຄວາມຕ້ອງການຈຳເປັນ ໂດຍແບ່ງເປັນ 3 ຕອນຄື: ຕອນທີ່ 1 ຂໍ້ມູນກ່ຽວກັບສະຖານະພາບທົ່ວໄປ, ຕອນທີ່ 2 ຂໍ້ມູນສະພາບປັດຈຸບັນ/ບັນຫາ ແລະ ຄວາມຕ້ອງການຈຳເປັນ 5 ດ້ານຄື: 1) ດ້ານການເຮັດວຽກເປັນທີມ, 2) ດ້ານການແລກປ່ຽນຮຽນຮູ້ຮ່ວມກັນ, 3) ດ້ານການບໍລິຫານວິຊາການໃນໂຮງຮຽນ, 4) ດ້ານການພັດທະນາຄູໃນໂຮງຮຽນ ແລະ 5) ດ້ານການສົ່ງເສີມຜູ້ຮຽນ ແລະ ຕອນທີ່ 3 ຄວາມຄິດເຫັນເພີ່ມເຕີມ ເຊິ່ງເຄື່ອງມືດັ່ງກ່າວໄດ້ຜ່ານການກວດສອບຄຸນນະພາບດ້ານຄວາມສອດຄ່ອງ ແລະ ຄວາມເໝາະສົມຈາກຜູ້ຊ່ຽວຊານຈຳນວນ 3 ທ່ານ ເຊິ່ງໄດ້ຄ່າດັດສະນີຄວາມສອດຄ່ອງລະຫວ່າງ 0.67 – 1.00, ໄດ້ຄ່າຄວາມເໝາະສົມໃນລະດັບເໝາະສົມຫຼາຍທີ່ສຸດ ( $\bar{x}$ = 4.85; S.D = 0.25)

*3.3 ວິທີເກັບກຳຂໍ້ມູນ*

ໃນການເກັບກຳ ແລະ ລວບລວມຂໍ້ມູນໃນການສຶກສາຄັ້ງນີ້, ຜູ້ສຶກສາຈະໄດ້ດຳເນີນການ ດັ່ງນີ້:

(1) ຜູ້ສຶກສານຳໜັງສືສະເໜີຈາກຄະນະບໍດີຄະນະສຶກສາສາດຫາອຳນວຍການແຕ່ລະໂຮງຮຽນພາຍໃນກຸ່ມໂຮງຮຽນມັດທະຍົມ ເພື່ອພົບພັນ ແລະ ຊີ້ແຈງຈຸດປະສົງຊັດເຈນເພື່ອຂໍອະນຸຍາດໃນການເກັບກຳຂໍ້ມູນນຳກຸ່ມຕົວຢ່າງທີ່ຢູ່ໃນຄວາມຄຸ້ມຄອງຂອງໂຮງຮຽນ. ເຊິ່ງປະກອບມີ: ມ.ສ ສັນຕິພາບ, ມ.ສ ປ່ອງຄຳ, ມ.ສ ເດັກກຳພ້າ, ມ.ສ ສິງ, ມ.ສ ປະຊາທິປະໄຕແລະ ມ.ປ ພັນຫຼວງ.

(2) ປະສານງານກັບຫົວໜ້າໜ່ວຍງານວິຊາການຂອງແຕ່ລະໂຮງຮຽນ ເພື່ອຊີ້ແຈງລາຍລະອຽດຂອງການເກັບກຳ ແລະ ລວບລວມຂໍ້ມູນ ເຊິ່ງແບບສອບຖາມຈະເກັບກຳດ້ວຍການ ແຈກຢາຍເອກະສານກ້ອບປີ້ໃຫ້ກຸ່ມຕົວຢ່າງຂອງແຕ່ລະໂຮງຮຽນ.

(3) ພາຍຫຼັງສຳເລັດການເກັບລວບລວມແບບສອບຖາມແລ້ວ, ຜູ້ສຶກສາຈະໄດ້ດຳເນີນການສຳພາດກຸ່ມເປົ້າ ໝາຍໃນໂຮງຮຽນແຕ່ລະແຫ່ງໂດຍປະສານງານຂໍອະນຸຍາດຈາກຜູ້ບໍລິຫານໂຮງຮຽນເພື່ອໃຫ້ຮັບຮູ້ເຖິງ ແລະ ເຂົ້າໃຈເຖິງການລົງເກັບກຳຂໍ້ມູນທີ່ເລິກເຊິ່ງ ແລະ ແນວຄວາມຄິດໃນມູມມອງຂອງຜູ້ບໍລິຫານໂຮງຮຽນ, ຫົວໜ້າໜ່ວຍງານວິຊາການ ແລະ ຄູສອນທົ່ວໄປ.

(4) ດາເນີນການແຈກຢາຍແບບສອບຖາມ ໂດຍມອບໝາຍໃຫ້ຜູ້ຊ່ວຍທີ່ໄດ້ຮັບການແຕ່ງຕັ້ງຈາກຜູ້ອຳນວຍການເປັນຜູ້ຊ່ວຍໃນການຊີ້ແຈງ ແລະ ອະທິບາຍວິທີຕອບແບບສອບຖາມ, ໂດຍໃຊ້ເວລາປະມານ 1 ອາດທິດ. ຫຼັງຈາກສຳເລັດການເກັບກຳຂໍ້ມູນດ້ວຍແບບສອບຖາມ ກໍ່ນຳຂໍ້ມູນທີ່ໄດ້ໄປຈັດທຳ ເພື່ອດຳເນີນການວິເຄາະໃນຂັ້ນຕໍ່ໄປ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ນຳໃຊ້ການວິເຄາະຂໍ້ມູນດ້ວຍຄ່າສະຖິຕິພື້ນຖານໄດ້ແກ່: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ດັດສະນີຄວາມຕ້ອງການຈຳເປັນ (Priority Need assessment Index: PNI) ແລະ ປຽບທຽບສະພາບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນດ້ວຍການວິເຄາະຄ່າຜັນປ່ຽນແບບທາງດຽວ (One-Way ANOVA). ສາລັບຄ່າສະເລ່ຍແມ່ນນາໄປປຽບທຽບກັບເກນເພື່ອອະທິບາຍຜົນ, ໂດຍກຳນົດເລືອກເອົາຄ່າດັດສະນີ PNI >= 0.2 ຂຶ້ນໄປ (Wongwanit, 2012; Vathanavong et al., 2020) ເຊິ່ງການົດເກນໃນການປະເມີນສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ ດັ່ງນີ້:

- ຄະແນນສະເລ່ຍແຕ່ 4.50 – 5.00 ໝາຍເຖິງ ລະດັບຫຼາຍທີ່ສຸດ
- ຄະແນນສະເລ່ຍແຕ່ 3.50 – 4.49 ໝາຍເຖິງ ລະດັບຫຼາຍ
- ຄະແນນສະເລ່ຍແຕ່ 2.50 – 3.49 ໝາຍເຖິງ ລະດັບປານກາງ
- ຄະແນນສະເລ່ຍແຕ່ 1.50 – 2.49 ໝາຍເຖິງ ລະດັບໜ້ອຍ
- ຄະແນນສະເລ່ຍ 1.00 – 1.49 ໝາຍເຖິງ ລະດັບໜ້ອຍທີ່ສຸດ.

## 4. ຜົນການຄົ້ນຄວ້າ

ຜົນການຄົ້ນຄວ້າພົບວ່າ: ການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{x}$ = 4.10; S.D = 0.62), ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{x}$ = 4.48; S.D = 0.72) ແລະ ຄ່າດັດສະນີຄວາມຕ້ອງການຈຳເປັນ (PNI) ຢູ່ລະຫວ່າງແຕ່ 0.20 ຫາ 0.24. ເມື່ອປຽບທຽບດ້ານສະພາບການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ແລະ ຄວາມຕ້ອງການຈຳເປັນໂດຍຈຳແນກຕາມໂຮງຮຽນແລ້ວເຫັນວ່າ: ທຸກໂຮງຮຽນມີລະດັບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ບໍ່ແຕກຕ່າງກັນ ດ້ວຍລະດັບຄວາມສຳຄັນ 0.05. ສະແດງດັ່ງຕາຕະລາງຕໍ່ໄປນີ້:

ຕາຕະລາງ 1 ສະພາບປັດຈຸບັນ ແລະ ຄວາມຕ້ອງການຈາເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ

| **ລາຍການປະເມີນ** | ສະພາບປັດຈຸບັນ | | | ຄວາມຕ້ອງການຈຳເປັນ | | |
|---|---|---|---|---|---|---|
| | $\bar{x}$ | $S.D$ | **ແປຜົນ** | $\bar{x}$ | $S.D$ | **ແປຜົນ** |
| 1. ດ້ານການເຮັດວຽກເປັນທີມ | 3.56 | 0.44 | ຫຼາຍ | 4.45 | 0.61 | ຫຼາຍ |
| 2. ດ້ານການແລກປ່ຽນຮຽນຮູ້ຮ່ວມກັນ | 3.45 | 0.43 | ຫຼາຍ | 4.49 | 0.59 | ຫຼາຍ |
| 3. ດ້ານການບໍລິຫານວິຊາການໃນໂຮງຮຽນ | 3.77 | 0.44 | ຫຼາຍ | 4.55 | 0.65 | ຫຼາຍທີ່ສຸດ |
| 4. ດ້ານການພັດທະນາຄູໃນໂຮງຮຽນ | 3.74 | 0.49 | ຫຼາຍ | 4.52 | 0.61 | ຫຼາຍທີ່ສຸດ |
| 5. ດ້ານການສົ່ງເສີມຜູ້ຮຽນ | 3.75 | 0.40 | ຫຼາຍ | 4.50 | 0.62 | ຫຼາຍທີ່ສຸດ |
| **ສະເລ່ຍລວມ** | **3.65** | **0.45** | **ຫຼາຍ** | **4.50** | **0.50** | **ຫຼາຍທີ່ສຸດ** |

ຈາກຕາຕະລາງທີ 1 ພົບວ່າສະພາບປັດຈຸບັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 3.65 ແລະ ຄ່າຜັນປ່ຽນມາດຕະຖານ 0.45 ( $\bar{x}$ = 3.65, S.D = 0.45), ເມື່ອພິຈາລະນາເປັນລາຍດ້ານພົບວ່າດ້ານທີ່ຫຼາຍເປັນລຳດັບທີ່ 1 ແມ່ນດ້ານການບໍລິຫານວິຊາການໃນໂຮງຮຽນ ມີຄ່າສະເລ່ຍ 3.77 ແລະ ຄ່າຜັນປ່ຽນມາດຕະຖານ 0.44 ( $\bar{x}$ = 3.77, S.D = 0.44), ຮອງລົງມາແມ່ນດ້ານການສົ່ງເສີມຜູ້ຮຽນ ມີຄ່າສະເລ່ຍ 3.75 ແລະ ຄ່າຜັນປ່ຽນມາດຕະຖານ 0.40 ( $\bar{x}$ = 3.75, S.D = 0.40) ແລະ ດ້ານການພັດທະນາຄູໃນໂຮງຮຽນ ມີຄ່າສະເລ່ຍ 3.74 ແລະ ຄ່າຜັນປ່ຽນມາດຕະຖານ 0.49 ( $\bar{x}$ = 3.74, S.D = 0.49).

ໃນຂະນະທີ່ຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມຢູ່ໃນລະດັບຫຼາຍທີ່ ມີຄ່າສະເລ່ຍ 4.50 ແລະ ຄ່າຜັນປ່ຽນມາດຕະຖານ 0.50 ( $\bar{x}$ = 4.50, S.D = 0.50), ເມື່ອພິຈາລະນາເປັນລາຍດ້ານພົບວ່າດ້ານທີ່ຫຼາຍເປັນລຳດັບທີ່ 1 ແມ່ນດ້ານການບໍລິຫານວິຊາການໃນໂຮງຮຽນ ມີຄ່າສະເລ່ຍ 4.55 ແລະ ຄ່າຜັນປ່ຽນມາດຕະຖານ 0.65 ( $\bar{x}$ = 4.55, S.D = 0.65), ຮອງລົງມາແມ່ນດ້ານການພັດທະນາຄູໃນໂຮງຮຽນ ມີຄ່າສະເລ່ຍ 4.52 ແລະ ຄ່າຜັນປ່ຽນມາດຕະຖານ 0.62 ( $\bar{x}$ = 4.52, S.D = 0.62) ແລະ ດ້ານການສົ່ງເສີມຜູ້ຮຽນ ມີຄ່າສະເລ່ຍ 4.50 ແລະ ຄ່າຜັນປ່ຽນມາດຕະຖານ 0.62 ( $\bar{x}$ = 4.50, S.D = 0.62).

ຕາຕະລາງ 2 ຈັດລຳດັບດັດສະນີຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນ

| **ລາຍການປະເມີນ** | ສະພາບປັດຈຸບັນ | ຄວາມຕ້ອງການຈຳເປັນ | **ດັດສະນີຄວາມຕ້ອງການຈຳເປັນ (PNI)** | **ຈັດລຳດັບຄວາມສຳຄັນ** |
|---|---|---|---|---|
| 1. ດ້ານການເຮັດວຽກເປັນທີມ | 3.56 | 4.45 | 0.25 | 2 |
| 2. ດ້ານການແລກປ່ຽນຮຽນຮູ້ຮ່ວມກັນ | 3.45 | 4.49 | 0.30 | 1 |
| 3. ດ້ານການບໍລິຫານວິຊາການໃນໂຮງຮຽນ | 3.77 | 4.55 | 0.21 | 3 |
| 4. ດ້ານການພັດທະນາຄູໃນໂຮງຮຽນ | 3.74 | 4.52 | 0.21 | 3 |
| 5. ດ້ານການສົ່ງເສີມຜູ້ຮຽນ | 3.75 | 4.50 | 0.20 | 5 |
| **ສະເລ່ຍລວມ** | **3.65** | **4.50** | **0.23** | |

ຈາກຕາຕະລາງທີ 2 ພົບວ່າລຳດັບຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມຢູ່ໃນເກນມີຄວາມຕ້ອງການຈຳເປັນ ມີຄ່າດັດສະນີຄວາມຕ້ອງການຈຳເປັນເທົ່າກັບ 0.23 (PNI = 0.23) ແລະ ເມື່ອຈັດລຳດັບຄວາມຕ້ອງການຈຳເປັນ ເຫັນວ່າລຳດັບທີ 1 ແມ່ນດ້ານການແລກປ່ຽນຮຽນຮູ້ຮ່ວມກັນ (PNI = 0.30), ຮອງລົງມາແມ່ນດ້ານການເຮັດວຽກເປັນທີມ (PNI = 0.25) ແລະ ດ້ານການບໍລິຫານວິຊາການໃນໂຮງຮຽນ ແລະ ດ້ານການພັດທະນາຄູໃນໂຮງຮຽນ ທັງສອງດ້ານມີຄ່າດັດສະນີຄວາມຕ້ອງການຈຳເປັນເທົ່າກັນຄື 0.21 (PNI = 0.21) ຕາມລຳດັບ.

ຕາຕະລາງ 3 ຜົນການປຽບທຽບຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍຈຳແນກ ຕາມໂຮງຮຽນ

| ໂຮງຮຽນ | | $\bar{x}$ | S.D | P-Value |
|---|---|---|---|---|
| 1. ມສ ປະຊາທິປະໄຕ | 2. ມສ ປ່ອງຄຳ | 0.20 | 0.097 | 0.471 |
| | 3. ມສ ເດັກກຳພ້າ | 0.11 | 0.098 | 0.914 |
| | 4. ມປ ພັນຫຼວງ | 0.23 | 0.100 | 0.393 |
| | 5. ມສ ສີງ | 0.08 | 0.096 | 0.980 |
| | 6. ມສ ສັນຕິພາບ | -0.11 | 0.078 | 0.823 |
| 2. ມສ ປ່ອງຄຳ | 1. ມສ ປະຊາທິປະໄຕ | -0.20 | 0.097 | 0.471 |
| | 3. ມສ ເດັກກຳພ້າ | -0.08 | 0.099 | 0.977 |
| | 4. ມປ ພັນຫຼວງ | 0.22 | 0.101 | 1.000 |
| | 5. ມສ ສີງ | -0.12 | 0.097 | 0.895 |
| | 6. ມສ ສັນຕິພາບ | -0.32 | 0.079 | 0.007 |
| 3. ມສ ເດັກກຳພ້າ | 1. ມສ ປະຊາທິປະໄຕ | -0.11 | 0.098 | 0.914 |
| | 2. ມສ ປ່ອງຄຳ | 0.08 | 0.099 | 0.977 |
| | 4. ມປ ພັນຫຼວງ | 0.11 | 0.102 | 0.948 |
| | 5. ມສ ສີງ | -0.03 | 0.098 | 1.000 |
| | 6. ມສ ສັນຕິພາບ | -0.23 | 0.080 | 0.139 |
| 4. ມປ ພັນຫຼວງ | 1. ມສ ປະຊາທິປະໄຕ | -0.23 | 0.100 | 0.393 |
| | 2. ມສ ປ່ອງຄຳ | -0.02 | 0.101 | 1.000 |
| | 3. ມສ ເດັກກຳພ້າ | -0.11 | 0.102 | 0.948 |
| | 5. ມສ ສີງ | -0.14 | 0.100 | 0.831 |
| | 6. ມສ ສັນຕິພາບ | -0.34 | 0.083 | 0.006 |
| 5. ມສ ສີງ | 1. ມສ ປະຊາທິປະໄຕ | -0.08 | 0.096 | 0.980 |
| | 2. ມສ ປ່ອງຄຳ | 0.12 | 0.097 | 0.895 |
| | 3. ມສ ເດັກກຳພ້າ | 0.03 | 0.098 | 1.000 |
| | 4. ມປ ພັນຫຼວງ | 0.14 | 0.100 | 0.831 |
| | 6. ມສ ສັນຕິພາບ | -0.19 | 0.078 | 0.270 |
| 6. ມສ ສັນຕິພາບ | 1. ມສ ປະຊາທິປະໄຕ | 0.11 | 0.078 | 0.823 |

| ໂຮງຮຽນ | | $\bar{x}$ | S.D | P-Value |
|---|---|---|---|---|
| | 2. ມສ ປ່ອງຄຳ | 0.32 | 0.079 | 0.007 |
| | 3. ມສ ເດັກກຳພ້າ | 0.23 | 0.080 | 0.139 |
| | 4. ມປ ພັນຫຼວງ | 0.34 | 0.083 | 0.006 |
| | 5. ມສ ສີງ | 0.19 | 0.078 | 0.270 |

ຈາກຕາຕະລາງ 3 ພົບວ່າ ຜົນການປຽບທຽບຄວາມຕ້ອງການຈຳເປັນໃນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍຈຳແນກຕາມໂຮງຮຽນ ໂດຍພາບລວມແມ່ນບໍ່ແຕກຕ່າງ ເມື່ອພິຈາລະນາຜົນການປຽບທຽບການທົດສອບແບບ One-Way ANOVA ຕາມວິທີຂອງ Post Hoc Test ດ້ວຍວິທີ Scheffe ພົບວ່າ ໂຮງຮຽນ ມສ ສັນຕິພາບເທົ່ານັ້ນທີ່ມີດັດສະນີຄວາມແຕກຕ່າງກັບໂຮງຮຽນ ມສ ປ່ອງຄຳ ແລະ ມປ ພັນຫຼວງ ເຊິ່ງມີຄ່າ P-Value ນ້ອຍກວ່າ 0.05.

## 5. ອະພິປາຍຜົນ

ຈາກຜົນການຄົ້ນຄວ້າສາມາດອະພິປາຍ ດັ່ງນີ້:

ຈາກຜົນໄດ້ຮັບຈາກການຄົ້ນຄວ້າການປະເມີນຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບໃນຄັ້ງນີ້ ພົບວ່າສະພາບປັດຈຸບັນຢູ່ໃນລະດັບຫຼາຍ ແລະ ຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍທີ່ສຸດ ໂດຍມີດັດສະນີຄວາມຕ້ອງການຈຳເປັນ 0.33, ຜົນການຄົ້ນຄວ້າດັ່ງກ່າວເກີດຂຶ້ນຍ້ອນວ່າ ກຸ່ມຕົວຢ່າງມີຄວາມຕ້ອງການຈຳເປັນໃນການພັດທະນາວຽກງານທີ່ກ່ຽວຂ້ອງຢ່າງແທ້ຈິງ ອີກດ້ານໜຶ່ງຍ້ອນວ່າຜູ້ຄົ້ນຄວ້າໄດ້ສຶກສາຕາມແນວຄິດ ແລະ ທິດສະດີຂອງ Sarnrattana (2010) ແລະ Wongwanit (2012) ທີ່ໃຫ້ທັດສະນະ ແລະ ແນວທາງສອດຄ່ອງໄປໃນທິດທາງດຽວກັນວ່າ ໃນຂະບວນການພັດທະນາການຄຸນນະພາບສຶກສາທີ່ແທ້ຈິງຈຳເປັນຕ້ອງມີການສຶກສາຂໍ້ມູນພື້ນຖານດ້ານການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນທີ່ແທ້ຈິງຂອງສະຖານສຶກສາ, ການປະເມີນຄວາມຕ້ອງການຈຳເປັນ ເປັນຂັ້ນຕອນທີ່ຊ່ວຍຈັດລຳດັບຄວາມແຕກຕ່າງ ຫລື ຊ່ອງວ່າງລະຫວ່າງສິ່ງທີ່ກຳລັງເກີດຂຶ້ນ ຫລື ສິ່ງທີ່ກຳລັງເກີດຂຶ້ນໃນເວລານີ້ ແລະ ສິ່ງທີ່ຈຳເປັນ. ຂໍ້ມູນທີ່ໄດ້ຮັບຈາກບຸກຄົນສາມາດໃຊ້ເພື່ອຈັດລຳດັບຄວາມສຳຄັນສຳລັບການຕັດສິນໃຈ, ແຜນການການກຳນົດທິດທາງການພັດທະນາທີ່ເໝາະສົມ ແລະ ຂໍ້ມູນດັ່ງກ່າວຈະນຳໄປສູ່ການປ່ຽນແປງໃນແງ່ບວກ ຫຼື ແນວທາງທີ່ສ້າງສັນ. ນອກຈາກນີ້ຍັງສອດຄ່ອງໃນດ້ານການຄົ້ນຄວ້າ ຄື ຜົນການຄົ້ນຄວ້ານີ້ສອດຄ່ອງກັບງານຄົ້ນຄວ້າຂອງ ນະລີນີ ພານສາຍຕາ ແລະ ປະວິນ ຄາໄຊ (2019) ໄດ້ສຶກສາຄວາມຕ້ອງການຈຳເປັນໃນການຝຶກອົບຮົມ ແລະ ຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນສາຍອາຊີບຂອງບຸກຄະລາກອນສາຍສະໜັບສະໜູນຂອງວິທະຍາໄລດຸສິດທານີ ພົບວ່າ: ດ້ານການສຶກສາມີສະພາບປັດຈຸບັນຢູ່ໃນລະດັບປານກາງ ໃນນີ້ມີຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນອາຊີບດ້ານຕຳແໜ່ງ/ໜ້າທີ່/ຄວາມຮັບຜິດຊອບໃນລະດັບປານກາງເຊັ່ນດຽວກັນ ເຊິ່ງເປັນການສຶກສາສະພາບທີ່ເປັນປັດຈຸບັນເພື່ອເປັນພື້ນຖານໃນການສຶກສາຫາຄວາມຕ້ອງການຈຳເປັນຕໍ່ໄປ ໂດຍມີຜົນການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມຈາກການພິຈາລະນາດັດສະນີຄວາມສຳຄັນມີຄວາມຕ້ອງການຈຳເປັນໃນລະດັບຫຼາຍທີ່ສຸດທຸກດ້ານ. ນອກຈາກນີ້, ຜົນການຄົ້ນຄວ້າຄັ້ງນີ້ຍັງມີທັງສ່ວນທີ່ສອດຄ່ອງ ແລະ ບໍ່ສອດຄ່ອງກັບງານຄົ້ນຄວ້າຂອງ Patisondicharern (2020) ກ່ຽວກັບຄວາມຕ້ອງການຈຳເປັນເພື່ອພັດທະນາສັກກະຍະພາບຂອງບຸກຄະລາກອນໃນສັງກັດມະຫາວິທະຍາໄລສີນະຄະຣິນວິໂຫຼດ, ໂດຍສ່ວນຜົນທີ່ສອດຄ່ອງກັນຄື: ບຸກຄະລາກອນໃນສັງກັດມະຫາວິທະຍາໄລສີນະຄະຣິນວິໂຫຼດ ມີຄວາມຕ້ອງການຝຶກອົບຮົມເພື່ອພັດທະນາສັກກະຍະພາບ ໂດຍພາບລວມ ແລະ ລາຍດ້ານຢູ່ໃນລະດັບຫຼາຍທີ່ສຸດ ແລະ ໃນສ່ວນທີ່ບໍ່ສອດຄ່ອງ ຄື: ບຸກຄະລາກອນໃນສັງກັດມະຫາວິທະຍາໄລສີນະຄະຣິນວິໂຫຼດທີ່ມີເພດຕ່າງກັນ, ມີອາຍຸຕ່າງກັນ, ມີລະດັບການສຶກສາທີ່ແຕກຕ່າງກັນມີຄວາມຕ້ອງການໃນການຝຶກອົບຮົມທີ່ແຕກຕ່າງກັນຢ່າງບໍ່ມີລະດັບຄວາມສຳຄັນທາງສະຖິຕິ. ໃນນີ້ຜົນການຄົ້ນຄວ້າແຕກຕ່າງກັນອາດຈະເປັນຍ້ອນວ່າ: ທັງສອງມະຫາວິທະຍາໄລພວກເຂົາມີຄວາມແຕກຕ່າງທາງດ້ານນະໂຍບາຍການສຶກສາ, ແຕກຕ່າງທາງດ້ານບໍລິບົດ, ແຕ່ຕ່າງທາງດ້ານສະພາບແວດລ້ອມ ແລະ ວິທີການສອນ ຈຶ່ງເຮັດໃຫ້ຜົນຄົ້ນຄ້ານີ້ແຕກຕ່າງກັນ. ນອກຈາກນີ້ແລ້ວຜົນການຄົ້ນຄວ້ານີ້ຍັງສອດຄ່ອງກັບງານຄົ້ນຄວ້າຂອງ Sousavajdee & Sthinyakorn (2020) ການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບກ່ຽວກັບການອອກແບບການຈັດການຮຽນການສອນສຳລັບຄູອະຊີວະສຶກສາ, ສາຂາຊ່າງອຸດສະຫະກຳໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ຜົນການຄົ້ນຄວ້າພົບວ່າ: ດັດສະນີຄວາມສຳຄັນຂອງຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍທີ່ສຸດ ເມື່ອລຽງລຳດັບຄວາມສຳຄັນແຕ່ຫຼາຍໄປຫານ້ອຍໄດ້ແກ່: ການອອກແບບສື່ການສອນ, ການວິເຄາະຫຼັກສູດ, ວິທີການສອນແບບໃໝ່ ຕາມລຳດັບ ໂດຍມີຄ່າດັດສະນີ

ຄວາມສຳຄັນຂອງລະດັບຄວາມຕ້ອງການຈຳເປັນຢູ່ລະຫວ່າງ 0.44 – 0.57.

ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຕ້ອງສຶກສາກ່ອນຈະດຳເນີນການພັດທະນາວຽກງານໃດ ໆ ກໍ່ ຕາມໂດຍສະເພາະວຽກງານການພັດທະນາຄຸນນະພາບການສຶກສາຍິ່ງເປັນບັນຫາທີ່ສຳຄັນເພາະຂໍ້ມູນທີ່ໄດ້ຈາກການສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ ແມ່ນຂໍ້ມູນທີ່ເປັນຄວາມຈິງປັດຈຸບັນຂະນະນັ້ນເອງ.

## 6. ສະຫຼຸບຜົນ

ຜົນການຄົ້ນຄວ້າຄັ້ງນີ້ສາມາດສະຫຼຸບໄດ້ຄື: (1)ສະພາບປັດຈຸບັນການປະຕິບັດງານຂອງການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{x}$ = 3.65; S.D = 0.45), ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບຂອງໂຮງຮຽນມັດທະຍົມໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍທີ່ສຸດ ( $\bar{x}$ = 4.50; S.D = 0.50) ແລະຄ່າດັດສະນີຄວາມຕ້ອງການຈຳເປັນ (PNI) ເທົ່າກັບ 0.23. ໂດຍຄວາມຕ້ອງການຈຳເປັນຫຼາຍກວ່າໝູ່ແມ່ນດ້ານດ້ານການແລກປ່ຽນຮຽນຮູ້ຮ່ວມກັນ, ຮອງລົງມາແມ່ນດ້ານການເຮັດວຽກເປັນທີມ, ດ້ານການບໍລິຫານວິຊາການໃນໂຮງຮຽນ ແລະ ດ້ານການພັດທະນາຄູໃນໂຮງຮຽນ ຕາມລຳດັບ. (2) ທຸກໂຮງຮຽນໃນນະຄອນຫຼວງພະບາງມີລະດັບການປະຕິບັດງານ ແລະ ຄວາມຕ້ອງການຈຳເປັນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ບໍ່ແຕກຕ່າງກັນ ດ້ວຍລະດັບຄວາມສຳຄັນ 0.05. ສະແດງໃຫ້ເຫັນວ່າໂຮງຮຽນມັດທະຍົມພາຍໃນນະຄອນຫຼວງພະບາງມີຄວາມຕ້ອງການຈຳເປັນໃນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບໂດຍແທ້ເພື່ອສ້າງການປ່ຽນແປງໂດຍການຮຽນຮູ້ຈາກການປະຕິບັດຈິງຂອງຄູ, ເປັນການພັດທະນາຂອງຄູດ້ວຍການພັດທະນາຜູ້ຮຽນຕະຫຼອດຮອດເປັນການທົບທວນຄືນການປະຕິບັດວຽກງານຂອງຄູທີ່ມີຜົນຕໍ່ການຮຽນຮູ້ຂອງຜູ້ຮຽນ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການຄົ້ນຄວ້າຄັ້ງນີ້ມີຂໍ້ຈຳກັດບາງດ້ານເຊິ່ງເປັນພຽງການເກັບກຳ ແລະ ຮວບຮວມຂໍ້ມູນແບບສຳຫຼວດທີ່ເປັນຂໍ້ມູນທາງດ້ານປະລິມານ ແລະ ແມ່ນຂໍ້ມູນທີ່ໄດ້ມາຈາກຄວາມຄິດເຫັນຄູສອນ.

## 8. ຂໍ້ສະເໜີແນະ

ໃນນາມຜູ້ຄົ້ນຄວ້າຂໍສະເໜີແນະບາງດ້ານ ດັ່ງຕໍ່ໄປນີ້:

1) ຜູ້ບໍລິຫານໂຮງຮຽນມັດທະຍົມພາຍໃນນະຄອນຫຼວງພະບາງ ສາມາດນຳໃຊ້ຜົນການສຶກສານີ້ໄປໃຊ້ເປັນແນວທາງໃນການກຳນົດນະໂຍບາຍໃນການອອກແບບ ແລະ ພັດທະນາໂຮງຮຽນໂດຍໃຊ້ຂະບວນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບໃຫ້ສອດຄ່ອງກັບຄວາມຕ້ອງການຂອງໂຮງຮຽນຕົນ.

2) ຜົນການຄົ້ນຄວ້ານີ້ສາມາດນຳໄປໃຊ້ໃນການອອກແບບຊຸດການສອນ ຫຼື ເປັນໂມດູນການຝຶກອົບຮົມເພື່ອສົ່ງເສີມວິທີການສ້າງຊຸມຊົນການຮຽນຮູ້ໄດ້ດ້ວຍລະບົບປົກກະຕິ ຫຼື ລະບົບອອນລາຍ ໄດ້ຢ່າງມີປະສິດທິພາບ

3) ສຳລັບການຄົ້ນຄວ້າຄັ້ງຕໍ່ໄປຄວນສຶກສາສາຍເຫດ ແລະ ບັນຫາຂອງສະພາບປັດຈຸບັນໃນການຈັດການຮຽນການສອນ ແລະ ຄວາມຕ້ອງການຈຳເປັນດ້ວຍການສຶກສາຂໍ້ມູນທາງດ້ານຄຸນນະພາບເປັນຕົ້ນແມ່ນການສຳພາດ ແລະ ການສັງເກດປະສົມປະສານ ເພື່ອສະທ້ອນໃຫ້ເຫັນເຖິງຂໍ້ມູນທີ່ຊັດເຈນ ແລະເລິກເຊິ່ງ ສຳລັບການສົ່ງເສີມຂະບວນການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຕໍ່ໄປ.

## 9. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງກຸ່ມໂຮງຮຽນມັດທະຍົມ ເລກທີ 3683/ສສກ.* ນະຄອນຫຼວງວຽງຈັນ.

_______ . (2019). *ຂໍ້ຕົກວ່າດ້ວຍການຈັດຕັ້ງເຄື່ອນໄຫວຂອງກຸ່ມໂຮງຮຽນມັດທະຍົມ.* ນະຄອນຫຼວງວຽງຈັນ.

_______. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ. (2022). *ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກຸ່ມໂຮງຮຽນຕົວແບບຂັ້ນແຂວງ ຢູ່ເທດສະບານນະຄອນຫຼວງພະລາງ ເລກທີ995/ສກຂ-ຫຼບ.* ແຂວງຫຼວງພະບາງ.

_______. (2022). *ແຜນການເຄື່ອນໄຫວຂອງກຸ່ມໂຮງຮຽນມັດທະຍົມເທດສະບານນະຄອນຫຼວງພະບາງ ສົກສຶກສາ 2023-2024.* ນະຄອນຫຼວງພະບາງ: ພະແນກສຶກສາທິການ ແລະ ກິລາແຂວງ ຫຼວງພະບາງ.

ສິລິຂັນ ບຸນທຳ ແລະ ຄະນະ (2021) ສຶກສາກ່ຽວກັບຄວາມຕ້ອງການຈຳເປັນເພື່ອພັດທະນາດ້ານການຈັດການຮຽນການສອນຂອງນັກສຶກສາມະຫາວິທະຍາໄລຣາ ັະພັດວະໄລບໍລົງກອນໃນພະບໍລົມມະລາຊູປະຖຳ. *Journal of Roi Kaensarn Academi, 6*(6), 34-51.

ຊະວະລິດ ຍິ້ມແຍ້ມ. (2023). *ຄວາມຕ້ອງການຈຳເປັນແລະແນວທາງການພັດທະນາການດຳເນີນງານລະບົບດູແລຊ່ວຍເຫຼືອນັກຮຽນຂອງໂຮງຮຽນຂະຫຍາຍໂອກາດທາງການສຶກສາ ສັງກັດເຂດພື້ນທີ່ການສຶກສາປະຖົມສຶກສາສະກົນນະຄອນ ເຂດ 1.* [ວິທະຍານິພົນຄຸສາດມະຫາບັນດິດ] ສາຂາວິຊາການບໍລິຫານການສຶກສາ, ມະຫາວິທະຍາໄລຣາຊະພັດສະກົນນະຄອນ.

ຊາລິນີ ຕຣີວະລັນຍູ. (2017). ການສ້າງຊຸມຊົນການຮຽນຮູ້ທາງວິຊາຊີບດ້ວຍການພັດທະນາບົດຮຽນຮ່ວມກັນ: ແນວຄິດ ແລະ ແນວທາງສູ່ຄວາມສຳເລັດ. *Journal of Education Studies, 45*(1), 299-319. Available at: https://digital.car.chula.ac.th/educujournal/vol45/iss1/18

ນະລິນີ ພານສາຍຕາ ແລະ ປະອະນາຄາໄຊ. (2019). ຄວາມຕ້ອງການໃນການຝຶກອົບຮົມ ແລະ ຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນສາຍອາຊີບຂອງບຸກຄະລາກອນສາຍສະໜັບສະໜຸນວິທະຍາໄລດຸສິດທານີ. *ວາລະສານວິທະຍາໄລດຸສິດທານີ, 11(2), 202-219.*

ບຸນຊົມ ສີສະອາດ. (2015). *ການວິໄຈເບື້ອງຕົ້ນ (ພິມຄັ້ງທີ່ 8) ສະບັບປັບປຸງໃໝ່.* ກຸງເທບ: ສຸວິຣິຍະສາດ ຈຳກັດ.

ໄພພະກາ ຜິວດຳ. (2021). ຊຸມຊົນແຫ່ງການຮຽນຮູ້ວິຊາຊີບສູ່ຄວາມສຳເລັດຂອງສະຖານສຶກສາ. *ວາລະສານນະວັດຕະກາການຈັດການສຶກສາ ແລະ ການວິໄຈ, 3*(1): 11-18.

ວິຈານ ພານິດ. (2012). *ການຮຽນຮູ້ສູ່ການປ່ຽນແປງ.* ສຳນັກງານເລຂາທິການສະພາການສຶກສາ. ກຸງເທບ: ບໍລິສັດ ເອສ໌ ອາ ພິ່ນຕິ້ງແມສໂປດັກເຊິນ ຈຳກັດ.

ເອກະພົນ ສິດແສງ. (2022). *ການສົ່ງເສີມຊຸມຊົນການຮຽນຮູ້ທາງວິຊາຊີບໃນສະຖານສຶກສາ ສັງກັດສຳນັກງານເຂດຈະຕຸຈັກ ກຸງເທບມະຫານະຄອນ.* [ວິທະຍານິພົນສຶກສາສາດມະຫາບັນດິດ] ສາຂາວິຊາການຈັດການການສຶກສາ, ວິທະຍາໄລຄຸສາດ ມະຫາວິທະຍາໄລທຸລະກິດບັນດິດ.

ໂຮງຮຽນ ມສ ປາກກະດິງ. (2022). *ບົດສະຫຼຸບການຈັດຕັ້ງວຽກງານຂອງກຸ່ມໂຮງຮຽນ ມສ ປາກກະດິງ ປະຈຳສົກສຶກສາ 2021-2022.* ເມືອງ ປາກກະດິງ: ຫ້ອງການສຶກສາທິການ ແລະ ກິລາເມືອງ ປາກກະດິງ.

ໂຮງຮຽນ ມສ ປະຊາທິປະໄຕ. (2022). *ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳສົກສຶກສາ 2022-2023.* ນະຄອນຫຼວງພະບາງ: ໂຮງຮຽນ ມສ ປະຊາທິປະໄຕ..

Dufour, Ri., Defour, Re., Eaker, R., Many, T.W., & Mattos, M. (2023). *Learning by Doing: A Handbook for Professional Learning Communities at Work: a Practical Guide to Action for PLC Teams and Leadership* (Third Edition).Available from: https://www.amazon.co.uk/Learning-Doing-Handbook-Professional-Communities/dp/1943874379

Patisondicharern, R. (2020). *Training needs to develop the potential of personnel under Srinakharinwirot University*. Master's Degree Thesis Business Studies graduate school Srinakharinwirot University.

Sarnrattana, U. (2010). “Need Assessment for Curriculum and Instruction Development.” *Journal of Education, Khon Kaen University 34*(1-2): 9-20. https://so02.tci-thaijo.org/index.php/EDKKUJ/article/view/49869/ 41268

Sousavajdee, Kh,. & Sthinyakorn, Ph. (2020). *A study of the need to develop a training course on tourism management for local government organizations.* [Master of Education Thesis] Adult Education and Continuing Education Graduate School of Mahidol University.

Vathanavong, T; Phanhnalath, V; San, S; Vathanavong, P; & Khotsaigno, S. (2020). An Investigation of Education for Sustainable Development (ESD) implementation in Lao Teacher Education Institutions (Lao TEIs) through Academic Workshop. *Souphanouvong Journal: Multi-disciplinary Research of Souphanouvong University. 6*(1): 95-108. Available from: http://www.su-journal.com/browse_article/view_journal.php?art_id=94

Wongwanit, S. (2012). *Need-Based Research Assessment* (2nd Ed). Bangkok: Chulalongkorn University Press.